**ບົດຄວາມເຜີຍແຜ່ຜ່ານສື່ຕ່າງໆ**

**ບົດບາດສຳຄັນຂອງວຽກງານການບັນຊີ ແລະ ກວດສອບໃນການພັດທະນາຕະຫຼາດທຶນ**

**ໂດຍ: ສຸລິຍາ ໝື່ນວິເສດ**

**ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ວຽກງານພັດທະນາຕະຫຼາດທຶນເປັນວຽກງານບູລິມະສິດໜຶ່ງຂອງ ສປປ ລາວ ນັບຕັ້ງແຕ່ຕະຫຼາດທຶນລາວໄດ້ຖືກສ້າງຕັ້ງຂຶ້ນເມື່ອປີ 2010 ເປັນຕົ້ນມາ, ສະນັ້ນ ໜຶ່ງໃນບູລິມະສິດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນວຽກງານການພັດທະນາຕະຫຼາດທຶນ ແມ່ນການສ້າງບຸກຄະລາກອນທາງດ້ານການບັນຊີ ຫຼື ນັກວິຊາຊີບການບັນຊີ ແລະ ກວດສອບທີ່ຖືຮັບຮອງໂດຍ ສຄຄຊ, ເນື່ອງຈາກວ່າ ວຽກງານການບັນຊີ ແລະ ການກວດສອບແມ່ນຖືວ່າມີຄວາມສຳຄັນຫຼາຍ ໃນການຊ່ວຍໃຫ້ຜູ້ທີ່ມີສ່ວນຮ່ວມ ໃນວຽກງານຕະຫຼາດທຶນບັນລຸເປົ້າໝາຍຂອງຕົນເປັນຕົ້ນແມ່ນບໍລິສັດອອກຈຳໜ່າຍຫຼັກຊັບ ໃນການກະກຽມເອກະສານລາຍງານການເງິນ ແລະ ການກວດສອບທາງບັນຊີ ເພື່ອຍື່ນສະເໜີຂໍອອກຈຳໜ່າຍຫຼັກຊັບຂອງຕົນ. ສຳລັບຜູ້ລົງທຶນ ວຽກງານການບັນຊີ ແລະ ກວດສອບແມ່ນຈະຊ່ວຍຢັ້ງຢືນຄວາມຖືກຕ້ອງ ແລະ ໂປ່ງໃສຂອງບໍລິສັດຈົດທະບຽນ ເພື່ອເປັນບ່ອນອີງໃນການຕັດສິນໃຈລົງທຶນໃນຕະຫຼາດທຶນ. ນອກຈາກນັ້ນ ວຽກງານການບັນຊີ ແລະ ກວດສອບຍັງຈະຊ່ວຍໃນການຊຸກຍູ້ການພັດທະນາຕະຫຼາດທຶນໃຫ້ມີຄວາມຍືນຍົງ ແລະ ມີລັກສະນະສືບເນື່ອງ, ພ້ອມທັງໄດ້ຮັບຄວາມເຊື່ອໝັ້ນຈາກສາກົນ.

ດັ່ງນັ້ນ, ວຽກງານການບັນຊີ ແລະ ກວດສອບ ແມ່ນເປັນປັດໄຈໜຶ່ງທີ່ສຳຄັນໃນການຕັດສິນການພັດທະນາທີ່ຍືນຍົງຂອງວຽກງານຕະຫຼາດທຶນພາຍໃນປະເທດ, ຊຶ່ງສາມາດແບ່ງອອກເປັນຫຼາຍດ້ານ ດັ່ງນີ້:

1. **ເປັນເຄື່ອງມືໃນການຕິດຕາມກວດກາ**: ກົນໄກຕະຫຼາດທຶນຖືກສ້າງຂຶ້ນ ເພື່ອເປັນຂົວຕໍ່ລະຫວ່າງຜູ້ມີເງິນ ແລະ ຜູ້ຕ້ອງການນຳໃຊ້ເງິນເພື່ອໄປໝູນໃຊ້ໃຫ້ເກີດຜົນປະໂຫຍດສູງສຸດ. ດັ່ງນັ້ນ, ເພື່ອຮັກສາຄວາມເປັນລະບຽບຮຽບຮ້ອຍ ແລະ ຮັບປະກັນການພັດທະນາຢ່າງຕໍ່ເນື່ອງຂອງຕະຫຼາດທຶນ, ຕະຫຼາດທຶນຕ້ອງໄດ້ຖືກຕິດຕາມກວດກາ ແລະ ກວດສອບຢ່າງຮອບຄອບ ຊຶ່ງເຄື່ອງມືອັນສຳຄັນໃນການຕິດຕາມກວດກາຕະຫຼາດທຶນ ແມ່ນວຽກງານການບັນຊີ ແລະການກວດສອບ. ຕົວຢ່າງ ຄວາມເຊື່ອຖືຂອງຜູ້ອຳນວຍການບໍລິສັດອອກຈຳໜ່າຍຫຼັກຊັບ ຫຼື ບໍລິສັດຈົດທະບຽນ, ການຕິດຕາມການດຳເນີນທຸລະກິດຂອງຜູ້ຖືຮຸ້ນ ແລະ ເຈົ້າໜີ້ ແມ່ນສາມາດປະຕິບັດໄດ້ຈາກການວິເຄາະຂໍ້ມູນ ແລະ ການລາຍງານທາງການບັນຊີຂອງບໍລິສັດທີ່ເປີດເຜີຍໃນແຕ່ລະໄລຍະ, ໂດຍອາໄສການເປີດເຜີຍຂໍ້ມູນທາງການບັນຊີດັ່ງກ່າວແມ່ນສາມາດສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ທີ່ມີສ່ວນຮ່ວມໃນຕະຫຼາດທຶນ;
2. **ຊ່ວຍຄາດຄະເນຜົນການດຳເນີນທຸລະກິດຂອງບໍລິສັດ**: ຈຸດປະສົງຕົ້ນຕໍໃນການນຳສະເໜີ ຫຼື ເປີດເຜີຍເອກະສານລາຍງານການເງິນແມ່ນເພື່ອເຜີຍແຜ່ຂໍ້ມູນທີ່ຈຳເປັນ ແລະ ສຳຄັນໃຫ້ແກ່ຜູ້ລົງທຶນ ແລະ ເຈົ້າໜີ້. ນອກຈາກນີ້, ຂໍ້ມູນທີ່ສະແດງໃນເອກະສານລາຍງານການເງິນສ່ວນໜຶ່ງແມ່ນນຳມາວິເຄາະເພື່ອຄາດຄະເນກະແສເງິນສົດ ແລະ ຜົນການດຳເນີນທຸລະກິດໃນອານາຄົດຂອງບໍລິສັດ;

3. **ອຳນວຍຄວາມສະດວກໃຫ້ແກ່ຕະຫຼາດທຶນ**: ເພື່ອຮັບປະກັນຄວາມສຳເລັດໃນການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ. ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຫຼັກຊັບ ຕ້ອງໄດ້ຮັບການຊ່ວຍເຫຼືອຈາກນັກວິຊາຊີບການບັນຊີ ເພື່ອກະກຽມຄວາມຖືກຕ້ອງ ແລະ ສອດຄ່ອງກັບມາດຕະຖານ

ສາກົນ ທາງການບັນຊີ ແລະ ການລາຍງານທາງການເງິນໃນແຕ່ລະໄລຍະ ແລະ ລະບຽບການອອກຈຳໜ່າຍຫຼັກຊັບທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ ການເປັນທີ່ປຶກສາການບັນຊີ ແລະ ການກວດສອບບັນຊີ. ການບໍລິການທັງສອງຢ່າງນີ້ ແມ່ນມີຄວາມສຳຄັນຫຼາຍ ເພາະວ່າຈະເປັນຫຼັກຖານໜຶ່ງທີ່ສາມາດຢັ້ງຢືນຄວາມຖືກຕ້ອງ,ໂປ່ງໃສ ແລະ ສອດຄ່ອງກັບບັນດາລະບຽບກົດໝາຍ ແລະ ມາດຕະຖານສາກົນທາງການບັນຊີ ແລະ ການລາຍງານທາງການເງິນ ພ້ອມທັງສາມາດສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ທີ່ມີສ່ວນຮ່ວມໃນຕະຫຼາດທຶນອີກດ້ວຍ.

ສະນັ້ນ, ວຽກງານການບັນຊີແມ່ນວຽກງານໜຶ່ງໃນຫຼາຍໆວຽກງານ ທີ່ສຳຄັນໃນການພັດທະນາຕະຫຼາດທຶນໂດຍສະເພາະແມ່ນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ ທີ່ຈຳເປັນຕ້ອງໄດ້ນຳໃຊ້ເອກະສານລາຍງານທາງການເງິນທີ່ຖືກຕ້ອງ, ແນ່ນອນ, ສອດຄ່ອງກັບຄວາມເປັນຈິງ ແລະ ມາດຕະຖານສາກົນທາງການບັນຊີ ແລະ ການລາຍງານທາງການເງິນ, ເພື່ອນຳມາພິຈາລະນາ ແລະ ວິເຄາະການລົງທຶນຂອງຕົນ.